http://fr.groups.yahoo.com/group/Groupe_Vethi_Paxathipatay_lao/message/23169

To: groupe_vethi_paxathipatay_lao@yahoogroupes.fr
From: "prasith prasith" <prasith_fr@.....>
Date: Fri, 18 Nov 2005 16:09:05 +0100 (CET)
Subject: [Groupe_Vethi_Paxathipatay_lao] Thao Keo et Thao Kham

ສບາຍດີ ທ່ານຜູ້ອ່ານ

ມື້ນີ້ ຈະໃຫ້ທ່ານໄດ້ພົບກັບ ທ້າວແກ້ວ ແລະ ທ້າວຄໍາ ອີກ ເພາະທັງສອງ ມີຂ່າວ ຢາກເຜີຍ ໃຫ້ທຸກຄົນໄດ້ຊາບ ແຕ່ກ່ອນນັ້ນກໍຢາກໄຂວົງເລັບນ້ອຍນຶ່ງເພືອແຈ້ງວ່າ ມີການປະທ້ວງ ທາງໂທຣະສັບກ່ຽວກັບເຣື່ອງພາສາລາວ ເມື່ອສອງມື້ກ່ອນນັ້ນວ່າ ການທີ່ ປຣະສິທ ບອກວ່າ ພາສາລາວນີ້ພວກລາວແດງບໍ່ຟັງຄວາມໃຜ ເພາະເຂົາ ຟັງແຕ່ ຄວາມເຂົາເອງ ທ່ານຜູ້ຫວັງດີຜູ້ນັ້ນ ໄດ້ປະທ້ວງວ່າ ເວົ້າຜິດ ທີ່ແທ້ນັ້ນຄວນ ເວົ້າວ່າ ລາວແດງ ບໍ່ຍອມຟັງຄວາມໃຜເດັດຂາດ ນອກຈາກຄວາມແກວແດງ ບ່ອນດຽວ ຈຶ່ງຂໍໃຫ້ທຸກຄົນຮັບຊາບໄວ້ນໍາກັນ ແລະຂໍຂອບໃຈທ່ານຜູ້ຫວັງດີ ມານະ ໂອກາດນີ້ດ້ວຍ.

ພົບກັບທ້າວແກ້ວແລະທ້າວຄຳຕໍ່ໄປນີ້ :

ຄ. ຈັ່ງໃດສະຫາຍ ຄ່ອຍຢູ່ບໍ່ ?

ກ. ເຫັນຫນ້າກໍເອີ້ນສະຫາຍ ໂລດເນາະ ເມື່ອຍເດ້

ຄ. ອ້າວ ເຮົາກໍບອກແລ້ວເດ້ວ່າ ເຮົາຈະບໍ່ປ່ຽນ. ເອີ ໄດ້ຍິນວ່າວານນີ້ ໂຕໄປສະຖານທູດ ເປັນແນວໃດ ?

ກ. ກໍມີຂ່າວໃຫມ່ເລັກໆນ້ອຍໆ ແຕ່ຂ່າວທີ່ຈະເວົ້າໃຫ້ຟັງນີ້ເຮົາໄດ້ຍິນມາແຕ່ທາງອື່ນ

ຄ. ອີ່ຫລືວະ ຂ່າວດີຫຼືຂ່າວບໍ່ດີ ສ່ຽວ

ກ. ເອີ! ເອີ້ນກັນສ່ຽວແນວກໍຢາກເວົ້າໃຫ້ຟັງຢູ່ແຕ່ເປັນເຣື່ອງຄວາມລັບ ແທ້ໆເດີ້ ໂຕຢ່າເວົ້າຕໍ່ໃຫ້ໃຜຮູ້ເດັດຂາດໃດເດີ້

ຄ. ເອີ້ ເຊື່ອນ່າ ຖ້າບໍ່ພໍ້ຄືນເຮົາບໍ່ເວົ້າດອກນ່າ ໃຜຈະໄປເວົ້າໃຫ້ຫມາຟັງ

ກ. ແມ່ນເຣື່ອງຄໍຂາດບາດຕາຍເດີ້ສ່ຽວເດີ້ ເຮົາບໍ່ໄດ້ເວົ້າຫຼິ້ນ

ຄ. ຫ້ວຍແມ່ນຊິເວົ້າຫລືບໍ່ເວົ້າເກາະດຽວນີ້ ?

ກ. ບ້ະ ຄືວ່າໃຈຮ້ອນແທ້ ! ໂຕກໍໄດ້ອ່ານຕົ້ວໃນເວທີຂອງເຮົາ ທີ່ເວົ້າກັນເຣື່ອງພວກເກີດເຈັບປ່ວຍຢ່າງກະທັນຫັນ ໂດຍບໍ່ຮູ້ສາເຫດ ເວລາຂຶ້ນຍືນກັບຄືນພາຍຫລັງທີ່ເມືອຢາມບ້ານ

ຄ. ເອີ ໄດ້ອ່ານຢູ່ ຜູ້ສຸດທ້າຍທີ່ເສັຽຊີວິດນີ້ ຄືວ່າມີນາມສະກຸນ ຊຸມພັນພັກດີ ແມ່ນຕົ່ວເນາະ ?

ກ. ເຮີ້ຍ ! ບໍ່ກສ່ຽວ ອັນນີ້ເມ່ນເຣື່ອງສົດໆຮ້ອນໆ ຫາກໍຜ່ານມາສອງອາທິດນີ້ນ່າ

ຄ. ຕາຍ ! ເຮົາບໍ່ຮູ້ເດີ້ ເວົ້າໃຫ້ຟັງແດ່

ກ. ມີຕາຍອີກແລ້ວ ຄົນຢູ່ ເມີແລ໊ງ ນີ້ນ່າ

ຄ. ຢູ່ເມີແລ໊ງເຮົາກໍຮູ້ແຈ່ຫມໍລຳຄຳພາທັ້ນແລ້ວ

ກ. ຜູ້ຕາຍມີ ນາມສະກຸນວ່າ ສາຍສມອນ ແຕ່ເຮົາຈື່ຊື່ບໍ່ໄດ້

ຄ. ເປັນຫຍັງຈຶ່ງຕາຍ ?

ກ. ແບບດຽວກັບກໍຣະນີອື່ນໆ ເມືອຢາມບ້ານ ພໍແຕ່ລົງຍົນ ມາຮອດເມືອງຝຣັ່ງ ກໍ

ຫມົດລົມຫາຍໃຈ ອາການເຈັບກໍມີຢູ່ເວລານັ່ງຍືນມາພຸ້ນແລ້ວ

ຄ. ພວກນາຍແພດ ເຂົາວ່າແນວໃດ ?

ກ. ນັບວ່າເປັນເທື່ອທຳອິດ ທີ່ດອກເຕີ້ ບອກສາເຫດຢ່າງແຈ້ງຊັດ

ຄ. ເຂົາວ່າແນວໃດ ?

ກ. ຫມໍບອກວ່າ ແມ່ນຢາພິດ ບໍ່ມີສີໃສ ມີຕຸ່ມຜຸດພົ້ນອອກມາ ຈາກຕົນຕົວ ຂອງຄົນຕາຍ ຫມໍບໍ່ໃຫ້ຜູ້ໃດເຂົ້າມາໃກ້

ຄ. ຕາຍ ຮ້າຍແຮງປານນັ້ນພຸ້ນວະສ່ຽວ ແລ້ວຮູ້ຮາຍລະອຽດ ກ່ຽວກັບພິດທີ່ວ່ານີ້ບໍ່ ?

ກ. ສ່ຽວເອີຍ ! ເຮົາໄດ້ຍິນມາແນວນີ້ ເຮົາໂລດບໍ່ຢາກເມືອເມືອງ ລາວອີກແລ້ວແຫລະ ແມ່ນຢາຂ້າແມງໄມ້ ຟລໍຣິດອນ ນີ້ນ່າ ຜູ້ປອງຮ້າຍ ລັກເອົາປົນໃສ່ ໃນເຄື່ອງດື່ມໃຫ້ກິນ ໂຕຈະຮູ້ເມື່ອວະ

ຄ. ໂອ ເປັນແນວນັ້ນເນາະ ແລ້ວແມ່ນເຂົາຢາກຂ້າເຮົາເພື່ອຫຍັງ

ກ. ເປັນການຂ້າລ້າງໂຄດສ່ຽວເອີຍ ມັນແມ່ນແຜນເລິກຊຶ້ງ ແນບນຽນ ສົມຮູ້ເປັນ

ໃຈກັນມາແຕ່ຂັ້ນຍອດ ເພາະເຣື່ອງແນວນີ້ ແມ່ນທາງຂັ້ນຍອດ ເຣີ່ມຂຶ້ນກ່ອນ ຕາຍກັນມາຫຼາຍສິບແລ້ວ ອາດເປັນແຜນຂອງນາຍເຫນືອຫົວວອຣດພຸ້ນແລ້ວ ຄິດຄົ້ນມາ ເພື່ອປາບປາມແບບງຽບໆ ຕໍມາກໍແມ່ນປະຊາຊົນ ພີ່ນ້ອງ ຫຼືຫມູ່ຄູ່ ພວກເຮົານີ້ແລ້ວທີ່ນຳ ມາໃຊ້ດ້ວຍເຫດຜົນນາໆປະການ ຕົວຢ່າງ ຊັງນ້ຳຫນ້າ ເຈົ້າບໍ່ ບໍ່ຢາກໃຫ້ເຈົ້າຢູ່ເພື່ອມາທວງເຮືອນຄືນບໍ່ ດັ່ງນີ້ເປັນຕົ້ນ

ຄ. ຫ້ວຍ ຕາຍຄັກໆ ສຳພໍໂຕບໍ່ຢາກຄືນເມືອຫັ້ນແລ້ວເນາະ ມັນອັນຕະຣາຍແທ ຕ໊ົວນີ້

ກ. ບໍ່ແມ່ນເຮົາເວົ້າຫຼິ້ນເດີ້ສ່ຽວ ນີ້ແຫຼະເຮົາຈຶ່ງບໍ່ຢາກເມືອອີກ ເຮົາບໍ່ທວງເອົາ ເຮືອນເຮົາອີກແລວ

ຄ. ຄັນຊັ້ນ ມັນເອົາຢາເບື່ອແນວນັ້ນໃຫ້ເຮົາກິນແບບໃດ ?

ກ. ລັກປະສົມ ໃສ່ເຫລົ້າຫລືຕອນເອົານ້ຳໃຫ້ກິນຊັ້ນຕົວ້ສ່ຽວ ມັນບໍ່ໃຫ້ເຫັນດອກ

ຄ. ນັ້ນ ປານນັ້ນບໍ່ຢາກໃຫ້ເວົ້າໄປທາງໃດ ບໍ່ເວົ້າໃຜຈະຮູ້

ກ. ຍັງມີອີກສ່ຽວບໍ່ແມ່ນແຕ່ ຟລໍຣິດອນ ມີອີກແນວນຶ່ງທີ່ເຂົາເອີ້ນວ່າ "ກ້ອນກົດ"

ມັນແມ່ນເອົານ້ຳກົດເຫັ້ງນີ້ເຫຼະໄປໃສ່ຕູ້ເຢັນແຊ່ເປັນນ້ຳກ້ອນໆນ້ອຍໆແລ້ວລັກຖິ້ມປົ໊ອກໃສ່ຈອກເຫຼົ້າ ຫຼືຈອກນ້ຳຂອງໂຕ ກິນລົງໄປນ້ຳກົດກໍຄ່ອຍໆ ກັດໃສ້ຂອງໂຕ ປົວແນວໃດກໍບໍ່ໄດ້ ບໍ່ຕາຍທັນທີທັນໃດ ພໍດີໃຫ້ໂຕໄດ້ມີໂອກາດ ຂີ່ຍົນກັບມາຕາຍຢູ່ປະເທດທີ່ສາມ

ຄ. ໂອ້ຍ ຟັງແລ້ວຂົນຫນາວລຸກ ຄັນຊັ້ນເຮົາຈະເຮັດແນວໃດ ?

ກ. ເຮັດແນວໃດກໍບໍ່ໄດ້ແລ້ວສ່ຽມເອີ້ຍ ມີແຕ່ບໍ່ເມືອຫັ້ນແລ້ວດີກວ່າ ຫລືຖ້າເມືອກໍໃຫ້ຣະວັງດີໆ ບໍ່ຢາສກຣະວັງ ກໍບໍ່ຕ້ອງເມືອ

ຄ. ຟັງຂ່າວນຳໂຕເທື່ອໃດ ເຮົາໂລດອ່ອນກຳລັງໃຈ ແຕ່ຊ້ຳວ່າຢາກຟັງ ເຮົາຖືເປັນຄວາມລັບ ບໍ່ໄດ້ດອກເດີ້ ເຮົາຈຳເປັນຕ້ອງໃຫ້ຜູ້ອື່ນຮູ້ນຳ ຢ່າວ່າຊັ້ນວ່າຊີ້ເນີ້

ກ. ເອົາແຕ່ໂຕຈະຄຶດເຖາະສ່ຽວ ເຮົາເມື່ອຍແລ້ວ

ຄ. ຢ່າຟ້າວທໍ້ແທ້ນ່າ ຊີວິດຄືການຕໍ່ສູ້ ມື້ຫນ້າພໍ້ກັນໃຫມ່

ກ. ພໍ້ກັນໃຫມ່ສ່ຽວ ບອກແມ່ສ່ຽວແດ່ ວັນເສົາຫນ້າ ເຮົາຈະພາເມັຽເຮົາໄປຢາມພວກໂຕ

ຄ. ໂອເຄ ! ເອົາລາບເສືອແນວໂຕພັກເນາະສ່ຽວເນາະ ?

ກ. ເອີ ! ກໍມີແຕ່ເຮົາສອງຄົນນີ້ແລ້ວກິນໄດ້ ຜູ້ຍ່າຜູ້ຍິງພວກເຮົາ ບໍ່ກິນຊີ້ນງົວເດ້ ມັນຊິບໍ່ຍາກເບາະ ເອົາກ້ອຍປາກໍໄດ້ໃດສ່ຽວ

ຄ. ເອີ ເຮົາຊິຖາມແມ່ເຈົ້າເຮືອນເບິ່ງເດີ້ ໂຊກດີ !

ປຣະສິທ